## ສົມໂພດພຣະກຣິສໂຕກະສັດ
## ວັນທີ 22 ພະຈິກ



**ພຣະວໍລະສານໂດຍນັກບຸນມັດເທວ 25, 31-46**

ເມື່ອບຸດແຫ່ງມະນຸດຈະສະເດັດມາເຕັມດ້ວຍສິມຸງຄຸນ ແລະແຫ່ແຫນດ້ວຍຝູງເທວະດາທັງຫລາຍ, ເວລານັ້ນພຣະອົງຈະປະທັບເທິງພຣະບັນລັງຂອງພຣະອົງ. ນານາຊາດຈະຊຸມນຸມກັນເຂົ້າມາຢູ່ຕໍ່ພຣະພັກຂອງພຣະອົງ, ແລະພຣະອົງຈະແຍກພວກເຂົາອອກຈາກກັນຄືກັນກັບນາຍຊຸມພາບານແຍກແກະອອກຈາກແບ້. ແກະໄວ້ເບື້ອງຂວາ ແລະແບ້ໄວ້ເບື້ອງຊ້າຍ. ເວລານັ້ນ, ພຣະມະຫາກະສັດຈະກ່າວກັບພວກຢູ່ເບື້ອງຂວາວ່າ: “ເຊີນເຂົ້າມາ, ພວກເຈົ້າຜູ້ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາ, ເຊີນມາຮັບສ່ວນໃນອານາຈັກທີ່ໄດ້ຈັດຕຽມໄວ້ສໍາລັບພວກເຈົ້າຕັ້ງແຕ່ສ້າງໂລກ. ຍ້ອນວ່າ, ເວລາເຮົາຫິວເຂົ້າ, ພວກເຈົ້າໄດ້ເອົາເຂົ້າໃຫ້ກິນ, ເວລາເຮົາຫິວນໍ້າ, ພວກເຈົ້າໄດ້ເອົານໍ້າໃຫ້ດື່ມ; ເວລາເຮົາເປັນແຂກເດີນທາງໄປ, ພວກເຈົ້າໄດ້ຕ້ອນຮັບ; ເວລາເຮົາເປືອຍເປົ່າຢູ່, ພວກເຈົ້າກໍໄດ້ເອົາເສື້ອຜ້າໃຫ້ນຸ່ງຫົ່ມ; ເວລາເຮົາເຈັບເປັນ, ພວກເຈົ້າໄດ້ເບິ່ງແຍງ; ເວລາເຮົາຖືກກັກຂັງ, ພວກເຈົ້າໄດ້ມາຢ້ຽມຢາມ.” ເວລານັ້ນ, ບັນດາຜູ້ຊອບທໍາຈຶ່ງຈະຕອບພຣະອົງວ່າ: “ພຣະອົງເຈົ້າ, ເວລາໃດພວກຂ້າພະເຈົ້າໄດ້ເຫັນພຣະອົງຫິວເຂົ້າ ແລະໄດ້ເອົາເຂົ້າໃຫ້ພຣະອົງກິນ? ເຫັນພຣະອົງຫິວນໍ້າ, ແລະໄດ້ເອົານໍ້າໃຫ້ພຣະອົງດື່ມ? ເຫັນພຣະອົງເປັນແຂກເດີນທາງແລະໄດ້ຕ້ອນຮັບພຣະອົງ; ເຫັນພຣະອົງເປືອຍເປົ່າແລະໄດ້ໃຫ້ພຣະອົງເຄື່ອງນຸ່ງຖື? ເຫັນພຣະອົງເຈັບເປັນຫລືຖືກກັງຂັງແລະໄດ້ໄປຢ້ຽມຢາມພຣະອົງ?” ແລະພຣະມະຫາກະສັດຈະຕອບພວກເຂົາວ່າ: “ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ທຸກເທື່ອທີ່ພວກເຈົ້າໄດ້ປະຕິບັດຕໍ່ພີ່ນ້ອງຜູ້ຕໍ່າຕ້ອຍທີ່ສຸດຂອງເຮົາ, ພວກເຈົ້າກໍໄດ້ປະຕິບັດຕໍ່ເຮົາເອງ”.

ຕໍ່ໄປ, ພຣະອົງຈະກ່າວກັບພວກຢູ່ເບື້ອງຊ້າຍວ່າ: “ສ່ວນພວກເຈົ້າ, ສັນຊາດຊົ່ວ, ຮີບໜີໄປໄກເຮົາ, ໄປສູ່ໄຟນິລັນດອນ, ທີ່ໄດ້ຕຽມໄວ້ສໍາລັບຜີປີສາດ ແລະພວກເທວະດາໝູ່ຂອງມັນ. ຍ້ອນວ່າເວລາເຮົາຫິວເຂົ້າ, ພວກເຈົ້າບໍ່ໄດ້ເອົາເຂົ້າໃຫ້ເຮົາກິນ. ເວລາເຮົາຫິວນໍ້າ, ພວກເຈົ້າບໍ່ໄດ້ເອົານໍ້າໃຫ້ດື່ມ. ເວລາເຮົາເປັນແຂກເດີນທາງໄປ, ພວກເຈົ້າກໍບໍ່ໄດ້ຕ້ອນຮັບ; ເວລາເຮົາເປືອຍເປົ່າຢູ່, ພວກເຈົ້າກໍບໍ່ໄດ້ເອົາເສື້ອຜ້າໃຫ້ນຸ່ງຫົ່ມ; ເວລາເຮົາເຈັບເປັນຫລືຖືກກັກຂັງ, ພວກເຈົ້າກໍບໍ່ໄດ້ໄປຢ້ຽມຢາມເລີຍ.” ເວລານັ້ນ, ພວກເຂົາຈຶ່ງຈະຖາມພຣະອົງວ່າ: “ພຣະອົງເຈົ້າ, ເວລາໃດພວກຂ້າພະເຈົ້າໄດ້ເຫັນພຣະອົງຫິວເຂົ້າ, ຫິວນໍ້າ, ເປັນແຂກເດີນທາງ, ເປືອຍເປົ່າຢູ່, ເຈັບເປັນ ຫລືຖືກກັກຂັງ, ແລະພວກຂ້າພະເຈົ້າບໍ່ໄດ້ຊ່ວຍພຣະອົງເລີຍ?” ພຣະອົງຈຶ່ງຈະຕອບພວກເຂົາວ່າ: “ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ທຸກເທື່ອທີ່ພວກເຈົ້າບໍ່ໄດ້ປະຕິບັດຕໍ່ຜູ້ໃດຜູ້ໜຶ່ງໃນບັນດາຜູ້ຕໍ່າຕ້ອຍນີ້, ພວກເຈົ້າກໍບໍ່ໄດ້ປະຕິບັດຕໍ່ເຮົາດ້ວຍ!” ແລ້ວພວກເຂົາຈະແຍກກັນໄປພວກລະທາງ: ພວກຊົ່ວຊ້ານີ້ຈະໄປສູ່ຄວາມທໍລະມານຕະຫລອດນິລັນດອນ; ພວກຊອບທໍາຈະໄປສູ່ຊີວິດນິລັນດອນ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 25, 31-46**

ບົດອ່ານທັງສາມບົດໃນວັນສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານວັນນີ້ ຍົກໃຫ້ພວກເຮົາເຫັນໃບໜ້າຂອງພຣະເຈົ້າໃນແຜນການແຫ່ງຄວາມຮອດຂອງພຣະອົງ.

ໃນບົດອ່ານທີໜຶ່ງ, ປະພາສົກເອເຊກຽນໄດ້ປຽບພຣະເຈົ້າກັບນາຍຊຸມພາບານທີ່ດີ. ນາຍຊຸມພາບານຜູ້ນີ້ເປັນຜູ້ທ້ອນໂຮມຝູງແກະຂອງຕົນໃຫ້ເປັນຝູງດຽວ, ລ້ຽງເກືອ, ປິ່ນປົວແລະໄປຊອກຫາແກະໂຕທີ່ເສຍໄປກັບມາ. ໃນວັນສຸດທ້າຍ, ນາຍຊຸມພາບານນີ້ຈະມາແຍກແກະໂຕອ້ວນພີອອກຈາກໂຕຈ່ອຍຜອມ. ເຂົາຈະແຍກແກະອອກຈາກແບ້.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລໄດ້ອະທິບາຍໃຫ້ຊາວໂກຣິນໂທເຂົ້າໃຈວ່າພຣະກຣິສໂຕຜູ້ຊຶ່ງພວກເຂົາເຊື່ອນັ້ນເປັນຜູ້ທຳອິດທີ່ກັບເປັນຄືນມາຈາກພວກຜູ້ຕາຍ. ຕໍ່ຈາກນັ້ນແມ່ນຜູ້ທີ່ເຊື່ອໃນພຣະອົງກໍຈະໄດ້ກັບເປັນຄືນມາເໝືອນກັບພຣະອົງ. ໃນວັນສຸດທ້າຍ, ພຣະອົງຈະກັບຄືນມາອີກຄັ້ງໜຶ່ງເໝືອນດັ່ງກະສັດ ເພື່ອຜາບແພ້ສັດຕູຜູ້ສຸດທ້າຍຂອງພຣະອົງຄືຄວາມຕາຍ.

ໃນພຣະວໍລະສານ, ນັກບຸນມັດເທວໄດ້ກ່າວເຖິງການສະເດັດກັບມາອີກຄັ້ງໜຶ່ງຂອງພຣະເຢຊູເຈົ້າ. ພຣະອົງກັບມາເໝືອນດັ່ງກະສັດແຫ່ແຫນດ້ວຍຝູງເທວະດາ. ເວລານັ້ນ, ພຣະອົງຈະຕັດສິນນານາຊາດດ້ວຍການແຍກຄົນດີອອກຈາກຄົນບໍ່ດີ. ເໝືອນດັ່ງນາຍຊຸມພາບານທີ່ແຍກແກະອອກຈາກແບ້. ພຣະອົງຈະຕັດສິນພວກເຂົາໂດຍອີງເທິງບັນຍັດແຫ່ງຮັກ. ຍ້ອນພຣະອົງກ່າວກັບຄົນດີກໍຄືຄົນບໍ່ດີວ່າ: "ທຸກເທື່ອທີ່ພວກເຈົ້າໄດ້ປະຕິບັດຕໍ່ພີ່ນ້ອງຜູ້ຕ່ຳຕ້ອຍທີ່ສຸດຂອງເຮົາ, ພວກເຈົ້າກໍໄດ້ປະຕິບັດຕໍ່ເຮົາເອງ". ກົງກັນຂ້າມ, ຖ້າພວກເຈົ້າບໍ່ປະຕິບັດຕໍ່ຜູ້ຕ່ຳຕ້ອຍທີ່ສຸດທ່າມກາງພວກເຈົ້າ, ພວກເຈົ້າກໍບໍ່ໄດ້ປະຕິບັດຕໍ່ເຮົາດ້ວຍ. ຈາກນັ້ນ, ຄົນດີຈະໄດ້ຮັບຊີວິດນິລັນດອນ. ສ່ວນຄົນບໍ່ດີກໍຈະໄດ້ຮັບຄວາມທຸກທໍລະມານຕະຫລອດນິລັນດອນ.

ໃນວັນສົມໂພດພຣະກຣິສໂຕກະສັດກໍຄືວັນສະຫລຸບປີພິທີກຳ, ພຣະກຣິສຕະຈັກໄດ້ໃຫ້ພວກເຮົາຄິດຫາວັນສຸດທ້າຍຂອງຊີວິດຂອງພວກເຮົາ, ວັນທີ່ພຣະກຣິສໂຕຈະສະເດັດກັບມາອີກຄັ້ງໜຶ່ງເພື່ອແຍກຄົນດີອອກຈາກຄົນບໍ່ດີ, ເພື່ອຕັດສິນແຕ່ລະຄົນດ້ວຍຄວາມຮັກແລະອີງເທິງຄວາມຮັກ. ຍ້ອນພຣະອົງເປັນອົງແຫ່ງຄວາມຮັກແລະພຣະອົງກໍປາດຖະໜາໃຫ້ພວກເຮົາຮັກແພງເພື່ອນພີ່ນ້ອງຂອງພວກເຮົາເຊັ່ນດຽວກັນ. ພວກເຮົາໄດ້ປະຕິບັດບັນຍັດແຫ່ງຮັກນີ້ໃນຊີວິດຂອງພວກເຮົາແລ້ວບໍ? ພວກເຮົາໄດ້ໃຫ້ຄວາມສົນໃຈແລະຊ່ວຍເຫລືອເພື່ອນພີ່ນ້ອງທີ່ຕ່ຳນ້ອຍທຸກຈົນຂອງພວກເຮົາແລ້ວບໍ?

**ພາວະນາ**

ໂອພຣະເຈົ້າ ໂຜດທຳໃຫ້ລູກເປັນເຄື່ອງມືແຫ່ງຄວາມຮັກຂອງພຣະອົງ ໂດຍການລືມຕົວເອງແລະຄິດຫາຄົນອື່ນ. ໂດຍການຮູ້ຈັກແບ່ງປັນແລະຊ່ວຍເຫລືອຄົນອື່ນ. ຍ້ອນວ່າທຸກຄັ້ງທີ່ລູກປະຕິບັດຕໍ່ຜູ້ຕ່ຳນ້ອຍທີ່ສຸດ ກໍແມ່ນພຣະອົງເອງທີ່ລູກປະຕິບັດ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ